# ການເຂົ້າຮ່ວມຝຶກອົບຮົມກ່ຽວກັບການສ້ອມແປງມໍເຕີຂອງຈັກສູບນໍ້າ

ໃນວັນທີ 26-31 ສິງຫາທີ່ຜ່ານມານີ້,ພວກເຮົາໄດ້ຈັດໂອກາດໃຫ້ພະນັກງານຂະແໜງຊົນລະປະທານ ໜ່ວຍງານຄຸ້ມຄອງນໍາໃຊ້ ແລະ ພະນັກງານຂັ້ນເມືອງ ໜ່ວຍງານຊົນລະປະທານ ໄດ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບທັກສະໃນການສ້ອມແປງ ບໍາລຸງຮັກສາຈັກສູບນໍ້າ ແລະ ການຕິດຕາມເພື່ອກວດສອບສະພາບການໃຊ້ງານຂອງຈັກສູບນໍ້າທີ່ບາງກອກ,ປະເທດໄທ.

## 1.

ຈັກສູບນ້ຳທີ່ບຳລຸງຮັກສາໂດຍກຸ່ມຜູ້ນຳໃຊ້ນ້ຳໂດຍການແນະນຳເຕັກນິກ ແລະ ໃຫ້ການຊ່ວຍເຫຼືອຈາກພະນັກງານຂັ້ນເມືອງ ແລະ ຂັ້ນແຂວງ(ໜ່ວຍງານຄຸ້ມຄອງນໍາໃຊ້). ເຖິງຢ່າງໃດກໍ່ຕາມ, ຍັງມີບັນຫາເຊັ່ນ:①ການບໍາລຸງຮັກສາປະຈໍາວັນ(ຄື: ເຮົາຄວນໃສ່ກະແລັດຫຼາຍປານໃດໃສ່ລູກປີ),②ຈຸດກວດກາການໃຊ້ງານ (ຄື: ຈັກມີປັນຫາຫຍັງ/ອາການແນວໃດ ແລະ ຈະແກ້ໄຂບັນຫາເບື້ອງຕົ້ນແນວໃດເພື່ອໃຫ້ມີອາຍຸການໃຊ້ງານດົນທີ່ສຸດ),③ທັກສະການວິເຄາະບັນຫາເບື້ອງຕົ້ນໄດ້ໄວຂຶ້ນ. ດັ່ງນັ້ນ,ໂຄງການ Savan PAD ຈຶ່ງໄດ້ຈັດຝຶກອົບຮົມໃຫ້ກັບພະນັກງານຝ່າຍລັດຜູ້ທີ່ຮັບຜິດຊອບວຽກງານຊົນລະປະທານເພື່ອສ້າງຄວາມເຂັ້ມແຂງທາງດ້ານເຕັກນິກເຫຼົ່ານີ້.




## 2. ເນື້ອໃນຂອງການຝຶກອົບຮົມ

ໃນການຝຶກອົບຮົມຄັ້ງນີ້ພວກເຮົາໄດ້ໃຊ້ຈັກສູບນ້ຳຂອງຊົນລະປະທານໃນເຂດໂຄງການເປົ້າໝາຍເພື່ອເປັນຕົວຢ່າງ,ເຊິ່ງໄດ້ສົ່ງໄປຄຽນທີ່ບໍລິສັດສ້ອມແປງມໍເຕີປະເທດໄທ,ເຊິ່ງໃນແຕ່ລະຂັ້ນຕອນ ແມ່ນມີພະນັກງານຝ່າຍລັດເຂົ້າຮ່ວມເພື່ອຮຽນຮູ້ ,ສຶກສາລະອຽດໃນທຸກຂັ້ນຕອນ ແລະ ພ/ງ ທັງ 4 ທ່ານກໍ່ມີຄວາມກະຕືລືລົ້ນສອບຖາມຄູຝຶກຢ່າງເອົາໃຈໃສ່.ໃນແຕ່ລະຂັ້ນຕອນຄູຝຶກໄດ້ແນະນໍາເຕັກນິກການບໍາລຸງຮັກສາໃນແຕ່ລະມື້ ແລະ ການນໍາໃຊ້ງານຈັກສູບນ້ຳແນວໃດໃຫ້ມີອາຍຸການໃຊ້ງານດົນທີ່ສຸດ

### ຜູ້ທີ່ເຂົ້າຮ່ວມ

**ທ່ານ ວັນລະຄອນ ຜາງທະວົງ**
(ວິຊາການໜ່ວຍງານຄຸ້ມຄອງນໍາໃຊ້
ຂະແໜງຊົນລະປະທານ ແຂວງສະຫວັນນະເຂດ)

**ທ່ານ ສຸດສະຫວັນ ແກ້ວພາລີວັນ**
(ວິຊາການໜ່ວຍງານຄຸ້ມຄອງນໍາໃຊ້
ຂະແໜງຊົນລະປະທານ ແຂວງສະຫວັນນະເຂດ)

**ທ່ານ ເວດສະດາ ຈັນທະວົງສາ**
(ວິຊາການໜ່ວຍງານຊົນລະປະທານ
ກະສິກໍາເມືອງໄຊບູລີ)

**ທ່ານ ສົ້ນ ພິມທອງສິງ**
(ວິຊາການໜ່ວຍງານຊົນລະປະທານ
ກະສິກໍາເມືອງທ່າປາງທອງ)


ມໍເຕີຈັກສູບນໍ້າ ກ່ອນການຍົກຍ້າຍ


ການຄຽນທອງແດງໃນມໍເຕີ (ຂັ້ນຕອນສໍາຄັນ)


ການອະນາໄມຊິ້ນສ່ວນມໍເຕີຈັກສູບນ້ຳ


ຮັບຟັງຂັ້ນຕອນການຊັກນໍາໄຟຟ້າຫຼັງຈາກໃສ່ລວດທອງແດງ


ກວດສອບຄວາມພ້ອມຂອງຈັກ

## 3. ຜົນຂອງການຝຶກອົບຮົມ

ພວກເຮົາໄດ້ຮຽບຮຽງປຶ້ມຄູ່ມືການໃຊ້ງານຈາກຄວາມຮູ້ ແລະ ປະສົບການໃນການຝຶກອົບຮົມໃນຄັ້ງນີ້. ປຶ້ມເຫຼັ້ມນີ້ປະກອບມີ 2 ພາກຄື: **I.** ເຕັກນິກທີ່ພະນັກງານ ຂັ້ນເມືອງ/ແຂວງໜ່ວຍງານຊົນລະປະທານ ແລະ ກຸ່ມຜູ້ນຳໃຊ້ນ້ຳຈະຕ້ອງໄດ້ນຳໃຊ້. **II.** ຄວາມຮູ້ພື້ນຖານກ່ຽວກັບຈັກສູບນ້ຳທີ່ພະນັກງານຊົນລະປະທານຈຳເປັນຕ້ອງຮູ້.


ທົບທວນຄືນບົດຮຽນໃນແຕ່ລະວັນ


ຮຽບຮຽງປຶ້ມຄູ່ມືການນຳໃຊ້

### ~ຄຳເຫັນຂອງຜູ້ເຂົ້າຮ່ວມ~



**ທ່ານ ວັນລະຄອນ**
ວິຊາການໜ່ວຍງານຄຸ້ມຄອງນຳໃຊ້
ຂະແໜງຊົນລະປະທານ ແຂວງສະຫວັນນະເຂດ

ຈາກການເຂົ້າຮ່ວມການຝຶກອົບຮົມຂ້າພະເຈົ້າໄດ້ເຫັນບັນຫາທີ່ເຮັດໃຫ້ຈັກສູບນ້ຳເພໄວ ① ການນຳໃຊ້ຈັກສູບນ້ຳບໍ່ຖືກວິທີ ② ເຕັກນິກການສ້ອມແປງໃນບ້ານເຮົາບໍ່ດີເທົ່າທີ່ຄວນ ຕົວຢ່າງ: ພື້ນທີ່ຕິດຕັ້ງຈັກສູບນ້ຳບໍ່ສົມດຸນກັນ, ຄຸນະພາບຂອງອຸປະກອນບໍ່ໄດ້ມາດຕະຖານ ແລະ ບວກກັບຄວາມບໍ່ສົມດູນຂອງກະແສໄຟຟ້າ. ນີ້ເປັນບັນຫາຫຼັກທີ່ເຮັດໃຫ້ຈັກສູບນ້ຳເພໄວ. ຫຼັງຈາກການຝຶກອົບຮົມຄັ້ງນີ້, ພວກຂ້າພະເຈົ້າແມ່ນໄດ້ເຮັດປື້ມຄູ່ມືໃນການນຳໃຊ້ ແລະ ການສ້ອມແປງຈັກສູບນ້ຳໃຫ້ຖືກວິທີ ແລະ ປຶ້ມນີ້ຈະຖືກຖ່າຍທອດໃຫ້ບັນດາພະນັກງານຂັ້ນເມືອງ ແລະ ບັນດາກຸ່ມຜູ້ນຳໃຊ້ນ້ຳເພື່ອສະດວກໃນການບຳລຸງຮັກສາ ແລະ ສ້ອມແປງດ້ວຍໂຕເອງໄດ້.

### ເນື້ອໃນສຳຄັນຂອງປຶ້ມຄູ່ມືການນຳໃຊ້

**I. ການບຳລຸງຮັກສາ ແລະ ກວດສອບການໃຊ້ງານ, ການກວດສອບປະຈຳວັນ ແລະ ການວິເຄາະບັນຫາຂອງຈັກສູບນ້ຳ.**

- ສາມຈຸດສຳຄັນສຳລັບການໃຊ້ງານຈັກສູບນ້ຳໃຫ້ໄດ້ດີທີ່ສຸດ
- ຈຸດທີ່ຕ້ອງໄດ້ກວດກາປະຈຳວັນກ່ອນ ແລະ ລະຫວ່າງນຳໃຊ້
- ທັກສະເລັກນ້ອຍສຳລັບການປະຫຍັດຄ່າກະແສໄຟຟ້າ
- ຄຸນະພາບ ແລະ ປະລິມານການເຕີມກະແລັດໃສ່ລູກບີ
- ຈຸດທີ່ຕ້ອງໄດ້ກວດກາໃນລະຫວ່າງການໃຊ້ງານ


ປຶ້ມແນະນຳ
ການຄຸ້ມຄອງ-ນຳໃຊ້ຈັກສູບນ້ຳຂັ້ນພື້ນຖານ
(SAVAN PAD Project)
2019

**II. ເຕັກນິກການສ້ອມແປງຈັກສູບນ້ຳ**

- ຈຸດສຳຄັນໃນຂັ້ນຕອນການແຍກສິ້ນສ່ວນ
- ຈຸດທີ່ຕ້ອງເອົາໃຈໃສ່ໃນເວລາມ້າງ ແລະ ປະກອບຄືນ
- ຈຸດສະເພາະຂອງມໍເຕີ້ໄຟຟ້າກະແສສະຫຼັບ ແລະ ໄຟຟ້າກະແສຕົງ
- ຈຸດທີ່ຕ້ອງເອົາໃຈໃສ່ໃນເວລາໃສ່ລູກບີ

ຖ້າສົນໃຈປຶ້ມຄູ່ມືການໃຊ້ງານ ໃຫ້ຕິດຕໍ່ພົວພັນມາທີ່ ຂະແໜງຊົນລະປະທານ ແຂວງສະຫວັນນະເຂດ.

(ຜູ້ຮັບຜິດຊອບ ທ່ານ ວັນລະຄອນ 041-212152)

## 4. ແຜນວຽກໃນຄັ້ງຕໍ່ໄປ

ພວກເຮົາຈະຈັດຝຶກອົບຮົມພາກສະໜາມຄັ້ງຕໍ່ໄປຢູ່ປະເທດລາວໂດຍຈະເຊີນເອົາຄູຝຶກຈາກບໍລິສັດສ້ອມແປງມໍເຕີປະເທດໄທມາເປັນຄູສອນ, ສະຖານທີ່ແມ່ນໄດ້ກຳນົດເອົາໂຄງການຕົ້ນແຫນ. ຈຸດປະສົງຂອງການຝຶກອົບຮົມແມ່ນ ເພື່ອເພີ່ມຄວາມສາມາດໃຫ້ກັບຊາວນາ ແລະ ພະນັກງານລັດຜູ້ທີ່ຮັບຜິດຊອບກ່ຽວກັບຈັກສູບນ້ຳໂດຍກົງ ເພື່ອການບຳລຸງຮັກສາ ແລະ ກວດສອບສະພາບການໃຊ້ງານຂອງຈັກສູບນ້ຳ.

## ລາຍງານໃນສະບັບຕໍ່ໄປ

ໃນສະບັບຕໍ່ໄປພວກເຮົາຈະລາຍງານຜົນຂອງກິດຈະກຳດ້ານການຕະຫຼາດ ເຊັ່ນວ່າ: ການປູກຜັກໃນເຮືອນຮົ່ມ ແລະ ງາດຳໃນຊ່ວງລະດູຝົນ ແລະ ສະໜັບສະໜູນກິດຈະກຳການສົ່ງເສີມການຂາຍ

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)